# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 3 ພຶສຈິກາ 2024 (11-3-2024)

## ຢາໂຄບແລະເອຊາວ: ຄູ່ແຂ່ງໃນຄອບຄົວ

**ຈຸດສໍາຄັນໃນບົດຮຽນ:** ການສະແດງຄວາມຖ່ອມຕົວແມ່ນສໍາຄັນຫຼາຍຕໍ່ການສ້າງສາຍສໍາພັນທີ່ແຕກຫັກຂຶ້ນໃໝ່.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ບາງທີທ່ານເຄີຍໄດ້ຍິນຄໍາເວົ້າທີ່ຖືກຍົກມາເລື້ອຍໆວ່າ, "ໝູ່ເພື່ອນອາດມາແລະໄປ, ແຕ່ສັດຕູມາສະສົມ." ຄໍາເວົ້ານັ້ນເປັນຈິງສໍາລັບຢາໂຄບ. ລາວໄດ້ດໍາເນີນຊີວິດສ່ວນຫຼາຍຂອງລາວເປັນຄົນທີ່ຫຼອກລວງ, ຕົວະຕົ້ມ. ເກືອບທຸກສາຍສໍາພັນຂອງຢາໂຄບກ່ຽວຂ້ອງກັບການຂັດແຍ້ງ, ແລະບໍ່ມີຂໍ້ຂັດແຍ້ງອັນໃດເລິກເຊິ່ງໄປກວ່າການເປັນພີ່ນ້ອງກັນລະຫວ່າງຢາໂຄບກັບເອຊາວ. ອ້າຍນ້ອງເຫຼົ່ານີ້ກຽດຊັງເຊິ່ງກັນແລະກັນໃນທາງທີ່ແຕກຕ່າງກັນ. ຢາໂຄບໄດ້ສະແດງຄວາມຍິ່ງຈອງຫອງແລະການແຂ່ງຂັນຕໍ່ສູ້ເອຊາວດ້ວຍສົງຄາມທາງຈິດໃຈ, ການຕ້ອງການໃຫ້ລາວມີສິດລູກກົກຂອງລາວແລະວາງແຜນກັບແມ່ເພື່ອລັກເອົາພອນຂອງລາວ. ເອຊາວໄດ້ຕອບໂຕ້ການທໍລະຍົດຂອງລາວດ້ວຍຄວາມກຽດຊັງແລະການຂົ່ມຂູ່. ເອຊາວປາກົດວ່າບໍ່ໄດ້ນັບຖືຄໍາພະຍາກອນທີ່ວ່າ, ມື້ນຶ່ງ, ລາວຈະຮັບໃຊ້ນ້ອງຊາຍ. ສິ່ງທີ່ຮ້າຍແຮງກວ່ານັ້ນ, ພໍ່ແມ່ຂອງພວກເຂົາ, ອີຊາກແລະເຣເບກາ, ໄດ້ສົ່ງເສີມໄຟຂອງການແຂ່ງຂັນຂອງພວກເຂົາ. ເມື່ອເປັນຜູ້ໃຫຍ່, ເຂົາເຈົ້າໄດ້ພົບກັນໃນສິ່ງທີ່ສາມາດເຮັດໃຫ້ຄູ່ແຂ່ງຕາຍໄດ້. ທັງສອງອ້າຍນ້ອງ, ຝາແຝດ, ຕ້ອງການທີ່ຈະຄອບຄອງເໜືອຄົນອື່ນ. ຄົນນຶ່ງຮູ້ສຶກວ່າມີສິດໂດຍກໍາເນີດ; ອີກຄົນນຶ່ງຮູ້ສຶກວ່າມີສິດເພາະລາວໄດ້ສັບປ່ຽນ, ຫຼອກລວງ, ແລະຕົວະຜູ້ເສີຍໃຈ. ການທໍລະຍົດແລະການຫັກຫຼັງເກືອບຈະປະທະກັນກັບຄວາມຕາຍຍ້ອນການແຂ່ງຊີງກັນລະຫວ່າງອ້າຍນ້ອງຄືຢາໂຄບແລະເອຊາວ. ເກືອບແທ້ໆ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

<u>**ສຶກສາພຣະຄັມພີ**</u>

### 1. ປະຖົມມະການ 27:35-37,41

*35. ອິຊາກຕອບວ່າ, "ນ້ອງຂອງເຈົ້າໄດ້ຫລອກລວງພໍ່ ເຂົາໄດ້ເອົາພອນທີ່ເຈົ້າຄວນຈະໄດ້ຮັບໄປແລ້ວ" 36. ເອຊາວເວົ້າວ່າ, "ນີ້ແມ່ນເທື່ອທີ່ສອງແລ້ວທີ່ເຂົາໂກງຂ້ານ້ອຍກໍບໍ່ແມ່ນຍ້ອນເຂົາຊື່ຢາໂຄບຫລື ເຂົາໄດ້ເອົາສິດທິການເປັນອ້າຍກົກຂອງຂ້ານ້ອຍໄປແລ້ວ ແລະບັດນີ້ເຂົາໄດ້ເອົາຄວາມພອນຂອງຂ້ານ້ອຍໄປອີກ ພໍ່ບໍ່ມີຄວາມພອນທີ່ເຫລືອໄວ້ໃຫ້ຂ້ານ້ອຍແດ່ບໍ່?" 37. ອິຊາກໄດ້ຕອບເອຊາວວ່າ, "ພໍ່ໄດ້ອວຍພອນໃຫ້ເຂົາເປັນນາຍເຈົ້າ ແລະເປັນນາຍພວກຍາດຕິພີ່ນ້ອງທັງຫລາຍ ພ້ອມທັງໃຫ້ເຂົາມີເຂົ້າແລະເຫຼົ້າອະງຸ່ນຢ່າງອຸດົມສົມບູນ ບັດນີ້ຈະຍັງເຫຼືອຫຍັງອີກທີ່ພໍ່ສາມາດເຮັດໃຫ້ເຈົ້າໄດ້ລູກເອີຍ."...41. ເອຊາວກຽດຊັງຢາໂຄບກໍຍ້ອນວ່າ ບິດາໄດ້ໃຫ້ພອນແກ່ເຂົາ ເອຊາວຄຶດວ່າ, "ວັນໄວ້ອາໄລພໍ່ຂອງເຮົາກໍໃກ້ເຂົ້າມາແລ້ວ ເມື່ອວັນນັ້ນສິ້ນສຸດລົງ ເຮົາກໍຈະຂ້າຢາໂຄບເສຍ"*

ຄວາມກຽດຊັງຂອງເອຊາວຕໍ່ຢາໂຄບນ້ອງຊາຍຂອງລາວອາດຈະເປັນຍ້ອນບັນຫາເບື້ອງໄຍທີ່ນ້ອງຊາຍຄົນນັ້ນໄດ້ວາງຕົວຈອບແລະຫວັງເອົາສິດລູກກົກຈາກອ້າຍຂອງລາວ. ກ່ອນທີ່ເຂົາເຈົ້າເກີດມາ ພຣະຜູ້ເປັນເຈົ້າໄດ້ກ່າວກັບເຣເບກາວ່າ, "ເດັກສອງຄົນທີ່ຢູ່ໃນທ້ອງຂອງເຈົ້າ ຈະເກີດເປັນປະຊາຊົນສອງປະເທດຕໍ່ສູ້ກັນ...ອ້າຍຈະຮັບໃຊ້ນ້ອງ." (ປຖກ 25:23), ເມື່ອເຂົາເຈົ້າໃຫຍ່ຂຶ້ນແຕ່ກໍຍັງນ້ອຍພໍທີ່ຍັງຢູ່ໃນເຮືອນ. ເອຊາວໄດ້ຂາຍສິດລູກກົກຂອງຕົນໃຫ້ແກ່ຢາໂຄບເພາະຕົ້ມແກງຊີ້ນ. ສິດການເກີດແມ່ນ "ສິດຂອງລູກກົກທີ່ໄດ້ຮັບມໍລະດົກເປັນສອງຕໍ່, ເອຊາວໄດ້ມາຈາກທົ່ງນາແລະຫິວແຮງ, ເມື່ອເອຊາວຂໍກິນຕົ້ມແກງຊີ້ນ, ຄໍາຕອບຢ່າງໄວວາຂອງຢາໂຄບຄືມີການແລກປ່ຽນ; ຕົ້ມແກງຊີ້ນຂອງລາວແລກກັບສິດລູກກົກຂອງເອຊາວ. ບາງທີຢາໂຄບກໍາລັງຊອກຫາວິທີທີ່ຈະເຮັດຕາມຄໍາທໍານວາຍຂອງພຣະຜູ້ເປັນເຈົ້າວ່າລາວຈະປົກຄອງເໜືອເອຊາວ. ໃນຂະນະນັ້ນກໍໃຫ້ສັນຍານແກ່ພວກເຮົາວ່າສິດລູກກົກຂອງເອຊາວໄດ້ຢູ່ໃນໃຈຂອງຢາ

ໂຄບຢູ່ແລ້ວ, ດັ່ງນັ້ນ, ເມື່ອເອຊາວໄດ້ເສັຽສິດລູກກົກໄປແລ້ວແລະຕໍ່ຈາກນັ້ນກໍເສັຽພຣະພອນຂອງລາວເພາະຢາໂຄບປອມຕົວຕົວະພໍ່, ແລະລັກເອົາພອນຂອງລາວ, ເອຊາວຮູ້ສຶກຖືກຕ້ອງທີ່ຈະກຽດຊັງນ້ອງຊາຍຂອງຕົນ. ແຕ່ລໍຖ້າບຶດນຶ່ງ. ລາວລັກຫຍັງ, ແລະໃຜຕົງການຫຼອກລວງທີ່ໃຫຍ່ທີ່ສຸດກວ່າໃຜ? ຍິ່ງກວ່ານັ້ນ, ອີຊາກຮູ້ວ່າເອຊາວໄດ້ຂາຍສິດເກີດຂອງລາວ. ເຖິງຢ່າງໃດກໍຕາມ, ອີຊາກຍັງໄດ້ວາງແຜນກັບເອຊາວເພື່ອໃຫ້ພອນແກ່ລາວ. ເຂົ້າມາທີ່ນາງເຣເບກາ. ນາງໄດ້ຍິນເຣື່ອງທັງໝົດນີ້ແລະໄດ້ສົມຮູ້ຮ່ວມຄິດກັບຢາໂຄບເພື່ອດຶງເອົາການຫຼອກລວງແລະຮັບພອນເພີ້ມໃຫ້ລາວ. ສະນັ້ນ, ສະມາຊິກທັງ 4 ຄົນຂອງຄອບຄົວນີ້ກໍາລັງຫຼິ້ນງານຊິ່ງກັນແລະກັນເພື່ອຫວັງເອົາສິ່ງທີ່ເຂົາເຈົ້າຕ້ອງການ. ມີສິ່ງທີ່ໜ້າຕື່ນເຕັ້ນຫຼາຍຢ່າງໄດ້ເກີດຂຶ້ນເມື່ອເຂົາເຈົ້າເຮັດທຸລະກິດສໍາເລັດແລະຢາໂຄບໄດ້ຮັບພອນຂອງພໍ່ຢ່າງເຕັມທີ: ອີຊາກສັ່ນສະເທືອນແຕ່ບໍ່ໄດ້ປ່ຽນແປງພອນ. ບາງທີລາວຮູ້ວ່ານີ້ຄືວິທີທີ່ພຣະຜູ້ເປັນເຈົ້າຕ້ອງການມັນມາຕລອດ. ສໍາລັບເຣເບກາ, ບໍ່ມີບັນທຶກທີ່ນາງບໍ່ເຄີຍເຫັນລູກຊາຍຂອງນາງອີກເລີຍ. ບາງທີນາງໄດ້ຕາຍໄປໃນລະຫວ່າງປີຕໍ່ມາຫຼັງຈາກຢາໂຄບໄດ້ໜີໄປເຮືອນຂອງລາບານ (ເອຊາວໄດ້ວາງແຜນທີ່ຈະຂ້າຢາໂຄບຫຼັງຈາກການຕາຍຂອງພໍ່ຂອງພວກເຂົາ). <u>ມີຄວາມອັນຕລາຍໃນການໃຫ້ເຫດຜົນຕໍ່ພຶຕິກັມຂອງພວກເຮົາເພື່ອໃຫ້ໄດ້ສິ່ງທີ່ພວກເຮົາເຊື່ອວ່າເປັນພຣະປະສົງຂອງພຣະຜູ້ເປັນເຈົ້າ.</u> <u>ມັນແມ່ນການລໍ້ລວງທີ່ຈະຄິດ "ຊ່ວຍພຣະເຈົ້າ" ໃຫ້ພຣະປະສົງຂອງພຣະອົງສໍາເລັດ</u>. ເຣເບກາອາດຈະມີຄວາມຮູ້ສຶກຖືກຕ້ອງທີ່ຈະຕົວະຍ້ອນຄໍາພຍາກອນວ່າ, "ຜູ້ອ້າຍຈະຮັບໃຊ້ຜູ້ນ້ອງ" (25:23). ແຕ່ມັນບໍ່ຖືກຕ້ອງທີ່ຈະຫຼອກລວງຄົນທີ່ພວກເຮົາຮັກເພື່ອ "ດີກວ່າເກົ່າ." ເຖິງແມ່ນວ່າມີສະມາຊິກທັງສີ່ໃນຄອບຄົວທີ່ມີການເບິ່ງຂ້າມຄວາມຜິດພາດ, ບາບຂອງເຂົາເຈົ້າແລະເປົ້າໝາຍທີ່ແຕກແຍກກັນເພື່ອໃຫ້ໄດ້ສິ່ງທີ່ເຂົາເຈົ້າປາຖນາ, ພຣະເຈົ້າໄດ້ເຮັດສໍາເລັດຕາມພຣະປະສົງຂອງພຣະອົງທີ່ພອນຈະມາເຖິງໂດຍລູກຊາຍຄົນທີສອງ, ຢາໂຄບ. ເອຊາວຖືກປະຖິ້ມດ້ວຍການສູນເສັຽອັນຮ້າຍແຮງ. ນ້ອງຂອງລາວໄດ້ທໍລະຍົດ, ຄວາມຄຽດແຄ້ນຂອງເອຊາວກໍພຸ່ງຂຶ້ນສູງເຖິງລະດັບໄຂ້ແຕກ. ລາວຮູ້ສຶກຖືກຕ້ອງໃນສິ່ງທີ່ລາວວາງແຜນທີ່ຈະເຮັດຕໍ່ໄປ: ການຂ້າຢາໂຄບ. ແຕ່ເອຊາວຈະຕ້ອງລໍຖ້າຈົນກ່ວາພໍ່ຂອງລາວເສັຽຊີວິດ. ຫຼັງຈາກນັ້ນ, ລາວຈະລົງມືທໍາ. ການສູນເສັຽພອນ, ລວມທັງຂະບວນການທັງໝົດຂອງການທໍລະຍົດຂອງແມ່ແລະນ້ອງຊາຍຂອງລາວ, ອາດຈະເປັນ "ເຟືອງທີ່ຫັກຫຼັງຂອງໂຕອູດ."

*ເປັນຫຍັງຄວາມເຫັນແກ່ຕົວຈຶ່ງທໍາລາຍຄວາມສັມພັນໃນຄອບຄົວ?*

## 2. ປະຖົມມະການ 33:1-4

*1. ເອຊາວພ້ອມລູກນ້ອງສີ່ຮ້ອຍຄົນໄດ້ມາຫາຢາໂຄບ ເມື່ອຢາໂຄບເຫັນເຊັ່ນນັ້ນ ເຂົາຈຶ່ງແບ່ງເດັກນ້ອຍໃຫ້ເລອາ ໃຫ້ຣາເຊັນ ແລະໃຫ້ສາວໃຊ້ສອງຄົນ 2. ເຂົາໄດ້ໃຫ້ຄົນໃຊ້ສອງຄົນກັບບຸດຂອງເຂົາຢູ່ໜ້າເລອາ ແລະບຸດຂອງເຂົາຢູ່ກາງ ຣາເຊັນ ແລະໂຢເຊັບຢູ່ທາງຫຼັງ 3. ສ່ວນຢາໂຄບເອງກໍອອກໜ້າພວກເຂົາໄປ ແລ້ວຂາບລົງເຈັດເທື່ອຈົນເຂົ້າໄປຮອດອ້າຍ 4. ເອຊາວກໍແລ່ນອອກໄປພົບພ້ອມທັງກອດແລະຈູບຢາໂຄບ ພວກເຂົາທັງສອງພາກັນຮ້ອງໄຫ້.*

ຫຼັງຈາກຫຼາຍປີແຫ່ງຄວາມບາດໝາງ, ຢາໂຄບກໍາລັງຈະໄດ້ພົບກັບເອຊາວ. ເອຊາວຈະປ່ອຍໃຫ້ສິ່ງທີ່ຜ່ານໄປລ່ວງຜ່ານໄປບໍ? ຫຼືຄວາມຄຽດແຄ້ນຂອງເອຊາວໄດ້ເພີ້ມຂຶ້ນໃນຫຼາຍທົດສະວັດ? ພໍ່ແມ່ຂອງເຂົາເຈົ້າໄດ້ຊຸບລ້ຽງຄວາມຫຍຸ້ງຍາກຂອງເຂົາເຈົ້າໂດຍການສະແດງຄວາມຮັກຫຼັງຊັງບໍ່ງ. ແລະເຂົາເຈົ້າໄດ້ຮັບການເຮັດໜ້າທີ່ຜິດປົກກະຕິຈາກຫຼາຍປີກ່ອນມາ. ການແຂ່ງດີເຫຼົ່ານີ້ໄດ້ຮັບຄວາມເສັຽຫາຍທັງໝົດໃນສາຍສັມພັນຂອງເຂົາເຈົ້າ. ແຕ່, ກ່ອນທີ່ເຂົາເຈົ້າຈະປະສົບກັບຄວາມປອງດອງກັນ, ຍັງມີພື້ນຖານທາງວິນຍານອັນເລິກເຊິ່ງທີ່ຢາໂຄບຕ້ອງປະເຊີນ. ພິຈາລະນາການເຄື່ອນໄຫວຂອງຄອບຄົວບາງຢ່າງທີ່ເຮັດໃຫ້ຄວາມສັມພັນຂອງເຂົາເຈົ້າ, ຈາກການແຂ່ງຂັນຂອງອ້າຍນ້ອງຈົນເຖິງການເຕົ້າໂຮມກັນຂອງອ້າຍນ້ອງ. ຫຼັງຈາກການທໍລະຍົດຂອງພຣະພອນ, ເຣເບກາໄດ້ບອກລູກຊາຍຂອງນາງ, ຢາໂຄບ, ໃຫ້ໜີຈາກຄວາມຄຽດແຄ້ນຂອງອ້າຍຂອງລາວແລະແລ່ນໄປຫາລາບານລຸງຂອງລາວ “ຈັກສອງສາມມື້” (ປຖກ 27: 44). ສອງສາມມື້ນັ້ນໄດ້ກາຍເປັນປະມານຊາວປີ. ໃນເວລານີ້, ຢາໂຄບໄດ້ແຕ່ງງານກັບຍິງສອງຄົນ, ຄືລູກສາວຂອງລາບານ, ແລະມີລູກຫຼາຍຄົນ. ຫຼັງຈາກການຂັດແຍ້ງທີ່ວຸ່ນວາຍກັບລາບານ, ຢາໂຄບໄດ້ພາຄອບຄົວຂອງລາວໜີໄປ. ພຣະຜູ້ເປັນເຈົ້າໄດ້ສັ່ງຢາໂຄບໃຫ້ກັບຄືນໄປບ່ອນທີ່ພຣະເຈົ້າໄດ້ສັນຍາກັບອັບຣາມແລະເຊື້ອສາຍຂອງລາວ (ປຖກ 31). ບັດນີ້ ຢາໂຄບກໍາລັງກັບຄືນໄປທີ່ການາອານ.

ລາວໄດ້ໜີຈາກສັດຕູຄົນນຶ່ງແຕ່ກໍຍັງຈະໄດ້ພົບກັບສັດຕູທີ່ໜ້າຢ້ານທີ່ສຸດຂອງລາວອີກ: ອ້າຍທີ່ເປັນນັກຮົບຂອງລາວ. ເອຊາວໄດ້ກາຍເປັນສິ່ງທີ່ພວກເຮົາຈະເອີ້ນໃນມື້ນີ້ວ່າເປັນນາຍທະຫານທີ່ມີອຳນາດ. ຢາໂຄບໝົດຫວັງ, ແລະຄອບຄົວຂອງລາວມີຄວາມສ່ຽງທີ່ຈະຖືກໂຈມຕີ. ຢາໂຄບໄດ້ສົ່ງຂອງຂວັນອັນລ້ຳຄ່າໄປໃຫ້ເອຊາວລ່ວງໜ້າເພື່ອເຮັດໃຫ້ຄວາມຄຽດຮ້າຍຂອງລາວອ່ອນລົງແລະຜ່ອນຄາຍຄວາມຄຽດແຄ້ນທີ່ຍັງຄ້າງຄາຢູ່. ບົກກະຕິຢາໂຄບຈະຫາທາງອອກຈາກບັນຫາ, ແຕ່ຄວາມຫວັງອັນດຽວຂອງລາວສຳລັບການປົດປ່ອຍໃນຄັ້ງນີ້ແມ່ນການອະທິຖານຫາພຣະເຈົ້າເພື່ອຂໍຄວາມຊ່ວຍເຫຼືອ. ໃນຄືນກ່ອນທີ່ຢາໂຄບຈະໄດ້ພົບມື້ນັດໝາຍກັບເອຊາວ, ເມື່ອລາວຢູ່ຄົນດຽວ, "ຊາຍຄົນນຶ່ງໄດ້ຕໍ່ສູ້ກັບລາວຈົນຮຸ່ງເຊົ້າ" (32:24). ນັກສາສນາສາດບາງຄົນເຊື່ອວ່າທູດສວັນອົງນີ້ຊົງເປັນພຣະຄຣິດກ່ອນເກີດ. ຢາໂຄບໄດ້ຕໍ່ສູ້ກັບພຣະເຈົ້າຕລອດຄືນ. ຈາກນັ້ນ, ຊາຍຄົນນັ້ນໄດ້ຕີກະໂພກຂອງຢາໂຄບ, ແລະຈາກນັ້ນລາວກໍຍ່າງຂາທ້ານ. ຢາໂຄບບໍ່ມີທາງເລືອກອື່ນໃນຕອນນີ້ນອກຈາກເຊື່ອພັນຢ່າງຖ່ອມຕົວໃນການປົກປ້ອງຂອງພຣະເຈົ້າ. ຫຼັງຈາກນັ້ນ, ພຣະເຈົ້າໄດ້ໃຫ້ຊື່ຢາໂຄບໃໝ່ວ່າ: ອິສຣາເອນ (32:28). ເມື່ອລາວຕໍ່ສູ້ກັບພຣະຜູ້ເປັນເຈົ້າ, ຢາໂຄບໄດ້ສຳເລັດສ່ວນທີ່ທ້າທາຍທີ່ສຸດຂອງການທົດລອງທາງວິນຍານຂອງລາວ. ລາວໄດ້ຫຍັບເຂົ້າໃກ້ພຣະຜູ້ເປັນເຈົ້າ, ຊຶ່ງໄດ້ຕຽມລາວໃຫ້ພົບກັບຄູ່ປໍລະປັກທີ່ເປັນຕາຢ້ານທີ່ສຸດຂອງລາວຄື: ເອຊາວ. ທັສນະຄະຕິຂອງຢາໂຄບຈາກການປະເຊີນໜ້າກັບພຣະເຈົ້າທີ່ປ່ຽນແປງຊີວິດຂອງລາວຈະເປີດເຜີຍຕົວຂອງມັນເອງໃນໄວໆນີ້ໂດຍຜ່ານຄວາມຖ່ອມຕົວຂອງລາວຕໍ່ເອຊາວ. ເພື່ອເປັນການເຕືອນພັຍຕໍ່ການຮຸກຮານຂອງເອຊາວ, ຢາໂຄບໄດ້ແບ່ງລູກຂອງຕົນລະຫວ່າງນາງເລອາ, ຣາເຊນ, ແລະຄົນຮັບໃຊ້ສອງຄົນ. ລາວເອົາຄວາມມັກໜ້ອຍທີ່ສຸດໄວ້ທາງໜ້າ ແລະນາງຣາເຊັນເມັຽຂອງລາວ ແລະລູກຊາຍຂອງເຂົາເຈົ້າ, ໂຢເຊັບ (ທີ່ລາວມັກ), ໄວ້ສຸດທ້າຍສຳລັບການປົກປ້ອງ. ອີກເທື່ອນຶ່ງ, ເຖິງແມ່ນວ່າຢາໂຄບຢູ່ໃນບ່ອນທີ່ຍອມຈຳນົນຕໍ່ພຣະຜູ້ເປັນເຈົ້າ, ແຕ່ລັກສນະເກົ່າຂອງລາວໄດ້ສະແດງໃຫ້ເຫັນເຖິງຄວາມຮັກຫຼັງຊັງບ່ຽງ, ເຊິ່ງໄດ້ແລ່ນເລິກຢູ່ໃນຄອບຄົວຂອງລາວ. ຢາໂຄບໄດ້ກົ້ມຂາບເຈັດເທື່ອ-ຄືກັບການກົ້ມຂາບຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າຫຼືຕໍ່ກະສັດ-ກ່ອນທີ່ຈະພົບເອຊາວ, ເປັນການຖ່ອມຕົວ. ຄວາມຖ່ອມຕົວຂອງລາວເຮັດໃຫ້ຢາໂຄບຢູ່ໃນບ່ອນທາງວິນຍານບ່ອນທີ່ພຣະຜູ້ເປັນເຈົ້າຈະໃຫ້ພອນແກ່ລາວ. ລາວບໍ່ໄດ້ລີ້ຕົວທາງຫຼັງຂອງສະມາຊິກໃນຄອບຄົວອີກຕໍ່ໄປ. ຢາໂຄບໄດ້ພົບກັບອ້າຍຂອງລາວໃນຄວາມເປັນຈິງຂອງຄວາມອ່ອນແອຂອງລາວ, ຄວາມຖ່ອມຕົວຂອງຄວາມເຊື່ອໃໝ່ຂອງລາວໃນພຣະຜູ້ເປັນເຈົ້າ, ແລະຊື່ໃໝ່ຂອງລາວ: ອິສຣາເອນ (ຂໍ້ທີ 27-28). ແຕ່ເອຊາວໂດຍບໍ່ໄດ້ຄິດອັນອື່ນອີກ, ແລ່ນໄປຫາລາວ, ກອດລາວ, ແລະຈູບລາວ. ເມື່ອຢາໂຄບຮູ້ວ່າເອຊາວບໍ່ມີຄວາມຄຽດແຄ້ນຕໍ່ລາວອີກ, ເຂົາເຈົ້າໄດ້ຮ້ອງໄຫ້ໃນການເຕົ້າໂຮມກັນທີ່ຫວານຊື່ນ. <u>ການສະແດງຄວາມຖ່ອມຕົວເປັນສິ່ງຈຳເປັນທີ່ຈະສ້າງຄວາມສັມພັນ</u>.

*ມີວິທີປະຕິບັດອັນໃດແດ່ທີ່ເຮົາສາມາດສະແດງຄວາມຖ່ອມຕົວຕໍ່ຜູ້ທີ່ເຮົາໄດ້ທຳຮ້າຍຫຼືເຮັດຜິດ?*

## 3. ປະຖົມມະການ 33:8-11

*8. ເອຊາວຈຶ່ງຖາມວ່າ, "ຄົນຊັ້ນໝວດທີ່ຂ້ອຍພົບກ່ອນນັ້ນເດແມ່ນພວກໃດກັນ?" ຢາໂຄບຕອບວ່າ, "ພວກນັ້ນນ້ອງໄດ້ສົ່ງມາຂໍຄວາມເມດຕາຈາກອ້າຍ" 9. ແຕ່ເອຊາວຕອບວ່າ, "ນ້ອງເອີຍ ອ້າຍມີພຽງພໍແລ້ວຈົ່ງຮັກສາໄວ້ເພື່ອນ້ອງເສັຽ" 10. ຢາໂຄບເວົ້າວ່າ, "ບໍ່ແມ່ນຢ່າງນັ້ນ ຖ້າອ້າຍຫາກມີຄວາມກະຣຸນາຕໍ່ນ້ອງແລ້ວ ຈົ່ງຮັບເອົາຂອງຕ້ອນນີ້ເທີນ ນ້ອງເຫັນໜ້າຕາຂອງອ້າຍ ກໍເໝືອນກັນກັບເຫັນພຣະພັກຂອງພຣະເຈົ້າ ແລະດຽວນີ້ອ້າຍກໍດີຕໍ່ນ້ອງຫລາຍແທ້ໆ. 11. ຈົ່ງຮັບເອົາຂອງຕ້ອນທີ່ນ້ອງເອົາມານີ້ສາເທີນ ເພາະພຣະເຈົ້າຊົງໂຜດກະຣຸນານ້ອງ ແລະໄດ້ປະທານທຸກສິ່ງທຸກຢ່າງທີ່ນ້ອງຕ້ອງການ" ຢາໂຄບວິງວອນຢ່າງອ່ອນນ້ອມຈົນອ້າຍຍອມຮັບເອົາ.*

ການຫາຍໃຈໂລ່ງຫຼັງຈາກຄວາມຮູ້ສຶກເບື້ອງຕົ້ນຂອງການຊຸມນຸມກັນ, ຢາໂຄບໄດ້ແນະນຳຄອບຄົວຂອງລາວ. ຢາໂຄບໄດ້ເລີ້ມເປີດສາກທາງເຂົ້າຂອງລາວໂດຍສົ່ງຂອງຂວັນໃຫ້ແລະການໃຫ້ທັງຄອບຄົວໄດ້ກົ້ມຂາບຕໍ່ໜ້າເອຊາວ ທັງເປັນການຖ່ອມຕົວ ແລະເປັນການປະທັບໃຈຢ່າງເປັນທາງການຕໍ່ເອຊາວຊຶ່ງລາວຫວັງວ່າການເຕົ້າໂຮມກັນຂອງເຂົາເຈົ້າຈະບໍ່ໄດ້ຮັບຜົນກະທົບຈາກອະດີດທີ່ເປັນພິດຂອງເຂົາເຈົ້າ. ເມື່ອເອຊາວຖາມວ່າ, "ຂະບວນແຫ່ທັງໝົດທີ່ເຮົາໄດ້ພົບນີ້ເຈົ້າໝາຍຄວາມວ່າແນວໃດ?" ຢາໂຄບຕອບວ່າ, "ເພື່ອພະອົງເຈົ້າຈະໄດ້ຮັບຄວາມພໍໃຈ" (ຂໍ້ 8). ໂດຍການເອີ້ນເອຊາວວ່າ, "ພະອົງເຈົ້າ," ຢາໂຄບສະແດງຄວາມຖ່ອມຕົວ. ພວກເຮົາສັງເກດເຫັນຢາ

ໂຄບບໍ່ໄດ້ເອີ້ນລາວວ່າ "ອ້າຍຂອງຂ້ອຍ" ຫຼືຊື່ຂອງລາວງ່າຍໆ. ເອຊາວຕອບຢາໂຄບກ່ຽວກັບຂອງຂວັນຂອງລາວ, "ຂ້ອຍມີພຽງພໍ, ນ້ອງຂອງຂ້ອຍເອີຍ,...ຮັກສາສິ່ງທີ່ເຈົ້າມີໄວ້" (ຂໍ້ 9). ເມື່ອຫຼາຍໆປີກ່ອນນັ້ນເອຊາວຢາກຂ້າຢາໂຄບເພາະເອົາສິ່ງທີ່ລາວຮູ້ສຶກວ່າເປັນຂອງລາວ. ດຽວນີ້, ເອຊາວໄດ້ມີພຽງພໍແລ້ວ. ເອຊາວບອກຢາໂຄບຜູ້ທີ່ລາວເຄີຍແຂ່ງຂັນສເມີວ່າ, "ຂ້ອຍມີພໍແລ້ວ." ບາງຄົນຄິດວ່າຄຳເວົ້າຂອງເອຊາວໄດ້ສື່ສານຢ່າງສຸພາບວ່າລາວບໍ່ຮູ້ສຶກເຖິງສິ່ງທີ່ນ້ອງຊາຍໄດ້ຮັບຈາກລາວອີກຕໍ່ໄປ. ບາງຄົນຄິດວ່າມັນສະແດງໃຫ້ເຫັນວ່າລາວຍອມຮັບຄຳພະຍາກອນວ່າພອນຈະໄປຫານ້ອງຊາຍ.

*ຜົນສະທ້ອນແບວໃດສຳລັບຄົນທີ່ປະຕິເສດການຄືນດີ?*

ນໍ້າສຽງຂອງການພົບກັນສະທ້ອນໃຫ້ເຫັນຫົວໃຈທີ່ລົ້ນດ້ວຍພຣະຄຸນຂອງຊາຍຜູ້ນຶ່ງທີ່ໄດ້ສຳພັດກັບຄວາມຖ່ອມຕົວຂອງນ້ອງຊາຍ, ບັດນີ້ໄດ້ຍອມຮັບປະສົບການຕ່າງໆຂອງລາວດ້ວຍຄວາມພໍໃຈ. ເອຊາວໄດ້ກາຍເປັນຄົນມີຄວາມໝາຍ, ເຊັ່ນດຽວກັນ. ຜູ້ຊາຍຄົນນີ້ທີ່ເຄີຍກຽດຊັງນ້ອງຊາຍຂອງຕົນທີ່ໄດ້ເອົາພຣະພອນໄປໃນເວລານີ້ສາມາດເວົ້າວ່າ, "ຂ້ອຍມີພໍແລ້ວ, ນ້ອງຂອງຂ້ອຍເອີຍ." ຄຳເວົ້າຂອງເອຊາວເປັນຄວາມຮັກອັນນຶ່ງທີ່ສະແດງໃຫ້ເຫັນຄວາມຮັກແບບອ້າຍນ້ອງທີ່ພົບກັນ-ໃໝ່. ການອ່ານສິ່ງທີ່ອ້າຍນ້ອງເຫຼົ່ານີ້ເວົ້າຄວນເຕືອນເຮົາຢ່າງລະມັດລະວັງໃຫ້ຟັງຄຳທີ່ບາງຄົນເວົ້າເມື່ອພົບກັບຄູ່ແຂ່ງ. ພວກເຮົາໄດ້ເຫັນຄວາມເປັນໄປໄດ້ສຳລັບສັນຕິສຸກສ່ວນບຸກຄົນແລະການຄືນດີໃນຄວາມຖ່ອມຕົວຂອງຢາໂຄບແລະການສະແດງອອກຂອງຄວາມອົບອຸ່ນຂອງເອຊາວ, "ນ້ອງຂອງຂ້ອຍ" (ຂໍ້ 9). ຍ້ອນຜົນຄຳເວົ້າທີ່ເຕັມດ້ວຍຮັກຂອງເອຊາວຕໍ່ນ້ອງຊາຍຂອງລາວ, ຢາໂຄບຢາກໃຫ້ພອນແກ່ເອຊາວຫຼາຍກວ່າທີ່ເຄີຍມີ. ແຕ່ເບິ່ງຄືວ່າເທື່ອນີ້ຢາໂຄບໄດ້ໃຫ້ຂອງຂວັນບໍ່ແມ່ນເພື່ອຄວາມອີ່ມໃຈແຕ່ດ້ວຍໃຈທີ່ຮັກອ້າຍ. ເມື່ອເອຊາວບອກຢາໂຄບໃຫ້ຮັກສາສິ່ງທີ່ຕົນມີ, ລາວໄດ້ສະແດງໃຫ້ພວກເຮົາເຫັນສິ່ງທີ່ຜູ້ນຶ່ງເວົ້າວ່າເມື່ອເຂົາເຈົ້າປ່ອຍໃຫ້ສິ່ງໃນອະດີດຜ່ານພົ້ນໄປແລ້ວ. ຢາໂຄບໄດ້ຕໍ່ວ່າໃຫ້ເອຊາວຄວນຮັບຂອງຝາກ. ລາວຮ້ອງຂຶ້ນວ່າການເຫັນໜ້າເອຊາວຄືກັບການເຫັນໜ້າຂອງພະເຈົ້າ. ຢາໂຄບໄດ້ເວົ້າບາງສິ່ງທີ່ຄ້າຍຄືກັບຕອນທີ່ໄດ້ຕໍ່ສູ້ກັບທູດສວັນວ່າ: "ຂ້ອຍໄດ້ເຫັນພຣະເຈົ້າໜ້າຕໍ່ໜ້າ,…ແຕ່ຊີວິດຂອງຂ້ອຍຍັງລອດມາໄດ້" (32:30). ນັ້ນຄື, ລາວໄດ້ມີຊີວິດຢູ່ກໍເພື່ອບອກເລື່ອງນີ້. ປາກົດວ່າສອງອ້າຍນ້ອງໄດ້ໃຫ້ອະພັຍເຊິ່ງກັນແລະກັນ. ພວກເຂົາທັງສອງໄດ້ຮັບຄວາມສງົບສຸກເມື່ອຈິດວິນຍານໄດ້ຮັບການຟື້ນຟູຂຶ້ນໃໝ່ທີ່ສາມາດຮູ້ບຸນຄຸນຢ່າງເຕັມສ່ວນເທົ່ານັ້ນ.

## ນຳໃຊ້ໃນຊີວິດ

ບາງບັນຫາທີ່ເຮົາມີແມ່ນສືບທອດມາຈາກຄົນອື່ນ, ແຕ່ສຸດທ້າຍເຮົາຕ້ອງຮັບຜິດຊອບຕໍ່ພຶຕິກັມຂອງຕົນເອງ. ເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ໄປນີ້:

• **ຮັບຜິດຊອບ,** ກຳນົດບາງພຶຕິກັມທີ່ຮຽນຮູ້ຈາກຄອບຄົວຂອງທ່ານແລະເລີ້ມຕົ້ນດ້ວຍຄວາມຖ່ອມຕົວເພື່ອແກ້ໄຂພວກມັນ.

• **ໃຫ້ອະພັຍ.** ຫຼັງຈາກໄດ້ຮັບມືກັບບາບແລະຂໍ້ບົກພ່ອງຂອງເຮົາຢ່າງຖ່ອມຕົວ, ໃນບັນດາສິ່ງທີ່ສຳຄັນທີ່ສຸດທີ່ເຮົາສາມາດເຮັດໄດ້ແມ່ນການໃຫ້ອະພັຍຜູ້ທີ່ເຮັດໃຫ້ເຮົາຜິດຫວັງຫຼືເປັນເຫດໃຫ້ເຮົາຖືກທຳຮ້າຍຫຼືຄວາມໂສກເສົ້າ. ການໃຫ້ອະພັຍຂອງທ່ານບໍ່ໄດ້ແກ້ຕົວພຶຕິກັມຂອງເຂົາເຈົ້າ; ມັນແມ່ນການປ່ອຍການກະທຳຜິດອອກໄປ. ເລືອກທີ່ຈະໃຫ້ອະພັຍ.

• **ເຮັດທຸກສິ່ງທີ່ທ່ານສາມາດເຮັດໄດ້ເພື່ອປອງດອງກັນ.** ໃຊ້ຄວາມຄິດລິເລີ້ມເພື່ອຄືນດີຄວາມສັມພັນທີ່ແຕກຫັກໃນຊີວິດຂອງທ່ານ. ນີ້ແມ່ນຍາກຫຼາຍ, ແຕ່ມັນໄດ້ຜົນກຳໄລຢ່າງມະຫາສານ. ການເຮັດຕາມຄວາມພາກພຽນຂອງທ່ານເພື່ອຮັກສາຈິດສຳນຶກທີ່ຈະແຈ້ງສາມາດຊ່ວຍປ້ອງກັນຄວາມຂັດແຍ້ງໃນອະນາຄົດ. ຈົ່ງເອົາບາດກ້າວຕ່າງໆດຽວນີ້ເພື່ອກ້າວໄປສູ່ຄວາມປອງດອງກັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**